**ມິຊຊາສະຫລອງພຣະກຣິສໂຕຮັບສິນລ້າງ**

**ວັນທີ 10 ມັງກອນ 2021**



**ພຣະວໍຣະສານ ໂດຍນັກບຸນມັກໂກ 1, 7-11**

ທ່ານຢວງບັບຕິສຕາໄດ້ປະກາດໃນເວລາທ່ານເທດສອນວ່າດັ່ງນີ້: "ນີ້ແລຜູ້ຊົງລິດອຳນາດກວ່າເຮົາມານຳຫລັງເຮົາ, ເຮົາເອງບໍ່ສົມກົ້ມລົງແກ້ສາຍເກີບຂອງພຣະອົງຊ້ຳ. ເຮົາທຳພິທີລ້າງໃຫ້ພວກເຈົ້າດ້ວຍນ້ຳ, ສ່ວນພຣະອົງນັ້ນຈະທຳພິທີລ້າງໃຫ້ພວກເຈົ້າດ້ວຍພຣະຈິດເຈົ້າ."

ເວລານັ້ນພຣະເຢຊູເຈົ້າສະເດັດຈາກບ້ານນາຊາແຣັດແຂວງຄາລີເລແລະຊົງຮັບພິທີລ້າງຈາກຢວງຢູ່ແມ່ນ້ຳຢໍແດນ. ເມື່ອສະເດັດຂຶ້ນຈາກນ້ຳແລ້ວ, ພຣະອົງກໍແລເຫັນທ້ອງຟ້າຍະອອກແລະເຫັນພຣະຈິດເຈົ້າສະເດັດລົງມາສະຖິດຢູ່ເໜືອພຣະອົງ ເປັນຮູບນົກກາງແກແລະມີສຽງດັງມາຈາກຟ້າວ່າ: "ທ່ານຜູ້ນີ້ແມ່ນບຸດສຸດທີ່ຮັກຂອງເຮົາ, ເຮົາພໍພຣະໄທນຳທ່ານເປັນຢ່າງຍິ່ງ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 1, 7-11**

ວັນນີ້, ພຣະກຣິສຕະຈັກສະຫລອງພຣະກຣິສໂຕຮັບສິນລ້າງເປັນວັນສະຫລອງຊຶ່ງສະຫລຸບກໍາ ນົດພຣະກຣິສຕະສົມພົບ, ກໍານົດບຸນໂນແອນ. ເມື່ອກ່າວເຖິງສິນລ້າງສິ່ງທີ່ຂາດບໍ່ໄດ້ກໍຄື: ນໍ້າ. ດ້ວຍເຫດນີ້ ໃນບົດອ່ານທັງສາມບົດຂອງວັນສະຫລອງນີ້ ພວກເຮົາຈະໄດ້ພົບກັບຄໍາວ່າ: ນໍ້າ.

ໃນບົດອ່ານທີໜຶ່ງ, ປະພາສົກອີຊາຢາກ່າວກັບປະຊາກອນອິສຣາແອນວ່າ: “ພວກທ່ານທຸກຄົນທີ່ ຫິວນໍ້າເຊີນມາຫານໍ້າເຖີດ, ແມ່ນວ່າພວກທ່ານບໍ່ມີເງິນກໍເຊີນມາດ້ວຍ”. ນໍ້າທີ່ປະພາສົກອີຊາຢາກ່າວນີ້ບໍ່ໄດ້ ໝາຍເຖິງແຕ່ນໍ້າດື່ມເພື່ອດັບກະຫາຍໃນປະເທດທີ່ແຫ້ງແລ້ງເທົ່ານັ້ນ, ແຕ່ຍັງໝາຍເຖິງສິ່ງທີ່ທຸກຄົນກະຫາຍ ໃນຈິດໃຈນັ້ນແມ່ນນໍ້າທີ່ໃຫ້ຊີວິດ. ນໍ້າບັນດານຊີວິດນີ້ບໍ່ແມ່ນສິ່ງທີ່ພວກເຮົາສາມາດຫາຊື້ໄດ້ດ້ວຍເງິນຄໍາ ຂອງພວກເຮົາ, ແຕ່ແມ່ນນໍ້າທີ່ພຣະເຈົ້າໃຫ້ພວກເຮົາລ້າໆ. ຫລືເວົ້າອີກຢ່າງແມ່ນພຣະຄຸນຂອງພຣະເຈົ້າທີ່ ປະທານໃຫ້ພວກເຮົານັ້ນເອງ. ດ້ວຍເຫດນີ້ປະພາສົກອີຊາຢາຈຶ່ງກ່າວວ່າ: “ແມ່ນວ່າພວກທ່ານບໍ່ມີເງິນກໍ ເຊີນມາດ້ວຍ”.

ແລະຜູ້ທີ່ຈະໃຫ້ພວກເຮົານໍ້າບັນດານຊີວິດນີ້ໄດ້ແມ່ນພຣະເຢຊູກຣິສໂຕເຈົ້ານັ້ນເອງ. ຢູ່ບົນກາງເຂນ ,ນໍ້າແລະເລືອດໄດ້ໄຫລມາຈາກພຣະສີຂ້າງຂອງພຣະອົງເພື່ອລຶບລ້າງໂທດບາບແລະປະທານຊີວິດໃຫ້ພວກ ເຮົາ. ດັ່ງທີ່ນັກບຸນຢວງໄດ້ກ່າວໃນຈົດໝາຍຂອງທ່ານຊຶ່ງພວກເຮົາໄດ້ຟັງໃນບົດອ່ານທີສອງວ່າ: “ແມ່ນ ພຣະເຢຊູນີ້ເອງໄດ້ສະເດັດມາດ້ວຍນໍ້າແລະພຣະໂລຫິດ. ບໍ່ແມ່ນດ້ວຍນໍ້າເທົ່ານັ້ນແຕ່ດ້ວຍນໍ້າແລະພຣະ ໂລຫິດ”. ດ້ວຍເຫດນີ້, ເມື່ອພວກເຮົາຮັບສິນລ້າງບາບ, ພວກເຮົາກໍໄດ້ຮັບການລຶບລ້າງບາບໂທດທັງໝົດ ຂອງພວກເຮົາ ເພື່ອຈະໄດ້ກາຍເປັນຄົນໃໝ່, ມີຊີວິດໃໝ່ອັນແມ່ນຊີວິດມາຈາກພຣະເຈົ້າ. ແລະພວກເຮົາ ຍັງໄດ້ກາຍເປັນລູກບຸນທໍາຂອງພຣະບິດາເຈົ້າຜ່ານທາງພຣະບຸດສຸດທີ່ຮັກຂອງພຣະອົງດ້ວຍ.

ດັ່ງທີ່ພຣະບິດາເຈົ້າໄດ້ກ່າວວັນນີ້, ເມື່ອເວລາພຣະເຢຊູເຈົ້າຂຶ້ນມາຈາກນໍ້າ: “ທ່ານຜູ້ນີ້ແມ່ນບຸດສຸດ ທີ່ຮັກຂອງເຮົາ, ເຮົາພໍພຣະໄທນໍາທ່ານເປັນຢ່າງຍິ່ງ”.

ກ່ອນທີ່ພຣະເຢຊູເຈົ້າຈະບັງເກີດມານັ້ນ, ເທວະດາໄດ້ແຈ້ງຂ່າວໃຫ້ພຣະນາງມາຣີອາໂດຍກ່າວວ່າ: ຜູ້ທີ່ຈະຊົງບັງເກີດມາຈາກພຣະນາງນັ້ນແມ່ນບຸດພຣະເຈົ້າຜູ້ສູງສຸດ. ວັນນີ້, ຢູ່ແມ່ນໍ້າຢໍແດນ, ພຣະບິດາເຈົ້າ ກໍໄດ້ຢັ້ງຢືນອີກຄັ້ງວ່າ: ຜູ້ນີ້ແລ, ແມ່ນບຸດສຸດທີ່ຮັກຂອງເຮົາ.

**ພາວະນາ**

ໂອພຣະເຈົ້າ ໂຜດຊ່ວຍລູກໃຫ້ເຊື່ອຢ່າງຈິງໃຈວ່າ ພຣະເຢຊູຜູ້ທີ່ມາໃນໂລກນີ້ແລະຕາຍບົນໄມ້ ກາງເຂນນັ້ນແມ່ນພຣະບຸດຂອງພຣະເຈົ້າແທ້. ພຣະອົງມາໃນໂລກນີ້ເພື່ອໃຫ້ລູກໄດ້ກາຍເປັນບຸດບຸນທໍາ ຂອງພຣະບິດາເຈົ້າຜ່ານທາງພຣະອົງນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ